ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລກທີ: 012 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 20 APR 2026

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ທີ່ນັບຖື
ບັນດາ ຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ທີ່ນັບຖື

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 2 ປະຈຳປີ 2026

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມສາມັນ ສະພາ ບໍລິຫານ ຄັ້ງທີ 2 ປະຈຳປີ 2026 ໃນ ວັນທີ 20 ເມສາ 2026, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

<u>ມະຕິ 01:</u> ເຫັນດີຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ແລະຈະສະເໜີຕໍ່ກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 02:</u> ເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ແລະ ບົດລາຍງານການເງິນປະຈຳປີ 2025 ຂອງ ວຈຊຕ ແລະຈະສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 03:</u> ເຫັນດີຮັບຮອງແຜນການດຳເນີນທຸລະກິດ 2026 ຂອງ ວຈຊຕ ແລະຈະສະເໜີຕໍ່ກອງປະຊຸມສາມັນ ຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 04:</u> ເຫັນດີຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2025 ແລະຈະສະເໜີຕໍ່ກອງປະຊຸມສາມັນ ຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ ໂດຍມີລາຍລະອຽດຄືດັ່ງລຸ່ມນີ້:

1. ແບ່ງເຂົ້າຄັງສະສົມຕາມລະບຽບການ: 10%;

2. ຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ;

3. ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;

4. ກຳນົດເອົາວັນທີ 06/05/2026 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ, ມື້ຈ່າຍເງິນປັນຜົນແມ່ນ 28/05/2026;

5. ມອບໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

<u>ມະຕິ 05:</u> ເຫັນດີຮັບຮອງການວ່າຈ້າງ ບໍລິສັດ ພຣາຍສວໍເຕີ້ ເຮົ້າສກຸບເປີສ (ລາວ) ຈຳກັດ ຜູ້ດຽວ ເປັນບໍລິສັດ ກວດສອບບັນຊີປະຈຳປີ 2026 ຂອງບໍລິສັດ ໂດຍມີຄ່າບໍລິການກວດສອບເປັນຈຳນວນເງິນ 29.200 ໂດລາ ແລະຈະ ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 06:</u> ເຫັນດີຮັບຮອງການເລືອກຕັ້ງ ສະມາຊິກສະພາບໍລິຫານ ສະໄໝທີ 5 ແລະຈະສະເໜີຕໍ່ກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 07:</u> ເຫັນດີຮັບຮອງການເລືອກຕັ້ງຄະນະກຳມະການຕ່າງໆຂອງ ວຈຊຕ ແລະຈະສະເໜີຕໍ່ກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 08:</u> ເຫັນດີຮັບຮອງການຊັບປ່ຽນຜູ້ຕ້ອແທນນິຕິບຸກຄົນໃນທະບຽນວິສາຫະກິດ ຈາກ ທ່ານ ເຫີຈຸ່ນ (Mr. HE Jun) ມາເປັນ ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin) ແລະຈະສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 09:</u> ເຫັນດີຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 8 ວ່າດ້ວຍຜູ້ສ້າງຕັ້ງ, ມາດຕາ 9 ວ່າດ້ວຍ ຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ແລະຈະສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາ ລະນາ ແລະ ຮັບຮອງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ຜູ້ອຳນວຍການ/ ສະມາຊິກສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

Wang Wei Kun